# ຂໍໃຫ້ພາກັນອົດກັນທົນສູ້

ຂໍໃຫ້ທາຍາດພຣະພຸທທະສາສນາທັງຫຼາຍທັງປວງ ຈົ່ງຍິນດີຮັບ ຮັບເອົາພອນຈາກພໍ່ພຣະແມ່ພຣະ ຈາກຜູ້ເປັນພຣະຢູ່ໃນຮ່າງກາຍ ຮ່າງກາຍຂອງພໍ່ພຣະແມ່ພຣະ! ຂໍໃຫ້ເຊື່ອວ່າພຣະມີຈິງ ພຣະຢູ່ໃນກາຍຄົນ ຢູ່ໃນກາຍມະນຸດ. ຂໍໃຫ້ທາຍາດຈົ່ງມີສັທທາ ຈົ່ງມີຄວາມເຫຼື້ອມໃສ ຈົ່ງເຊື່ອໄວ້ກ່ອນ ເຊື່ອວ່າພຣະຢູ່ໃນມີຈິງ ບຸນເຮົາມີແລ້ວຈິ່ງໄດ້ພົບໄດ້ພໍ້ກັນ ບຸນເຮົາມີພໍຈິ່ງໄດ້ພໍ້ກັນ ບຸນເຮົາບໍ່ໜ້ອຍແລ້ວ ບຸນເຮົາຫຼາຍ ເຮົາຈິ່ງມີໂອກາດ ໂອກາດໄດ້ພົບໄດ້ພໍ້ ໄດ້ພໍ້ພຣະສີອະຣິຍະ ອະຣິຍະເມຕຕາ ເມຕຕາຕົນ ເມຕຕາຜູ້ອື່ນ. ຍາດທັງຫຼາຍເອີຍ! ຍາດທັງຢູ່ໃກ້ ຍາດທັງຢູ່ໄກ ຍາດທັງໃຫຍ່ ຍາດທັງນ້ອຍ ຍາດທັງເໝີດທຸກໆທ່ານ ຍາດມາແຕ່ໃກ້ ຍາດມາແຕ່ໄກ ທັງເໝີດທຸກຕົນທຸກຄົນນຳກັນ ຂໍຈົ່ງເຄົາລົບພຣະທັມນຳກັນ ເຄົາລົບພຣະທັມ ເພື່ອໃຫ້ພຣະທັມໂປຣດເມຕຕາ ພຣະທັມມະຊາດ ພຣະທັມມະຊາດທັງຫຼາຍທັງປວງ ພຣະທັມມະຊາດເບື້ອງສູງ ພຣະທັມມະຊາດເບື້ອງສູງມີຈິງ ມີຈິງຈົ່ງເຮົາໄດ້ຮັບພອນນຳ ພອນຂອງພຣະທັມ ຂໍໃຫ້ທຸກຄົນທັງຫຼາຍຈົ່ງເອົາໃຈໃສ່ພາວະນາບຸນຫາ ພາວະນາບຸນຫາພຣະທັມ ພຣະທັມຈິ່ງຊີສົ່ງບຸນໃຫ້ ຂໍໃຫ້ເຊື່ອວ່າພຣະທັມມະຊາດມີຈິງ ເຊື່ອໄວ້ນຳກັນທຸກຕົນທຸກຄົນ ເຊື່ອວ່າຄວາມຈິງຕ້ອງມີຈິງຕະຫຼອດໄປ ຄວາມຈິງຄືສິ່ງບໍ່ຕາຍ ສິ່ງບໍ່ຕາຍກໍຄືທັມມະຊາດ ລ້ວນໆ.

ຍາດທັງຫຼາຍເອີຍ! ຍາດທັງຫຼາຍນຳກັນ ຈົ່ງເຄົາລົບບູຊາກາບໄຫວ້ ກາບໄຫວ້ຫາຄຸນພຣະພຸທ ຄຸນພຣະທັມ ຄຸນພຣະສົງຄ໌ ຄຸນພຣະຣັດຕະນະຕຣັຍ ຄຸນພຣະຜູ້ມີພຣະຄຸນທັງຫຼາຍ ຄຸນພຣະພໍ່ ຄຸນພຣະແມ່ ຄຸນພຣະຜູ້ຮູ້ ຜູ້ຕື່ນ ຜູ້ເບີກບານ ຄຸນພຣະສາສະໜາຂອງພຣະສາສະດາ ຄຸນທັງຫຼາຍທັງປວງ ຄຸນຜູ້ມີພຣະຄຸນທັງຫຼາຍ ຄຸນຜູ້ຢູ່ໃນໂລກດຽວກັນນີ້ ຄຸນມວນມະນຸດ ແລະໝູ່ສັດທັງຫຼາຍ ຂໍຈົ່ງຮູ້ຈັກເຄົາລົບ ອັນນີ້ເປັນພອນ ຢ່າງນີ້ເປັນພອນ ຢ່າງນີ້ກໍຄືຢ່າງທີ່ໃຫ້ເຮົາຮູ້ ແລະເຂົ້າໃຈເຖິງເຮົາ ເຮົາມີຫຍັງຢູ່ໃນກາຍຂອງເຮົາ ເຮົາພາກັນຮູ້ ເຮົາພາກັນເຂົ້າໃຈ ເຂົ້າໃຈນຳກັນທັງເໝີດເຖີດ! ເຂົ້າໃຈດ້ວຍກັນທັງເໝີດເຖີດ! ຈົ່ງເຄົາລົບບູຊາກາບໄຫວ້ຫາຄຸນ ແລະຜູ້ມີພຣະຄຸນທັງຫຼາຍທັງປວງນຳກັນ ຂໍຈົ່ງຊ່ວຍບອກຕໍ່ໆກັນໄປ ບອກຕໍ່ໆກັນໄປເຖີດ! ບອກຕໍ່ກັນໄປ ເພື່ອຈະໄດ້ບຸນໄດ້ກຸສົນນຳກັນ ກຸສົນເກີດແທ້ເກີດຈິງ ຂໍໃຫ້ພໍໃຈຮັບ ຮັບເອົາໄປຝາກກັນ ຝາກເພື່ອໃຫ້ຫຼຸດ ຝາກເພື່ອໃຫ້ພົ້ນ ຝາກເພື່ອໃຫ້ໄດ້ປະໂຫຍດທັງຕອນຍັງ ທັງຕອນຕາຍ.

ຍາດທັງຫຼາຍເອີຍ! ຍາດຕິທັມເຮົານີ້ ຂໍຈົ່ງມີນ້ຳໃຈໃຫ້ກັນ ຜູ້ໄດ້ຮັບກໍຂໍໃຫ້ໄດ້ແບ່ງ ແບ່ງກັນ ແບ່ງອອກໃຫ້ກັນ ແບ່ງຄຸນງາມຄວາມດີ ແບ່ງສິ່ງດີງາມຈາກພຣະທັມມະຊາດ ຂໍໃຫ້ຍາດຕິທັມທັງຫຼາຍ

ຈົ່ງຍິນດີຮັບເອົາໄວ້ໃນຫົວໃຈເຈົ້າຂອງ ຮັບເອົາຂອງດີໄວ້ ຂອງດີມີຄຸນມີຄ່າ ຄ່າສູງ ຄ່າສູງມາກມາຍຫຼວງຫຼາຍ ຄ່າສູງຢ່າງບໍ່ມີອັນປຽບອັນປະມານ ຫາປະມານບໍ່ໄດ້ ຫາໄດ້ແຕ່ນຳຜູ່ມີຈິດໃສ ຜູ່ມີຈິດໃສໆຈິ່ງຫາໄດ້ງ່າຍ ຫາໄດ້ງ່າຍດາຍ ຫາໄດ້ຢ່າງປະມານບໍ່ໄດ້ ຂໍໃຫ້ຄິດວ່າໄດ້ຢູ່ທີ່ໃຈ ໄດ້ຢູ່ທີ່ມີມີແກ້ວ ແກ້ວມະນີ ມະນີທີ່ວ່າທຸກຄົນປາຖະໜາຫາ ປາຖະໜາຫາຍາກພົບຍາກພໍ້ ຂໍຈົ່ງພໍ້ເຖີດ! ພໍ້ນຳກັນທັງເໝີດດ້ວຍເຖີດ! ຈົ່ງພໍ້ເອງເຖີດ!

ວັນທີ **12/04/2016**, ເວລາ **20:30-21:05** ໂມງ, ໃຊ້ເວລາຈົດຂຽນໄວ້ **35** ນາທີ
**ຜູ່ຮັບຈົດຂຽນ ແລະຕີພິມໄວ້ຈາກແມ່ພຣະ ດຣ. ມະນີສົດ ແກ້ວດາລາ**
ໂທລະສັບ:**(+856-20) 2222 8489,** E-mail: manisothk@gmail.com;